ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງສາທາລະນະສຸກ**

### ໂຄງການເຂົ້າເຖິງການບໍລິການສຸຂະພາບ ແລະ ໂພຊະນາການ ໄລຍະ 2 (P178957)

# ແຜນພັນທະ ດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)

**ກັນຍາ 2023**

# ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ຕໍ່ໄປນີ້ເອີ້ນວ່າ "ຜູ້ຮັບທຶນ") ຈະຈັດຕັ້ງປະຕິບັດໂຄງການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ ໄລຍະທີ 2 ໂດຍມີກະຊວງສາທາລະນະສຸກເປັນເຈົ້າຂອງໂຄງການ ໂດຍຜ່ານກົມແຜນການ ແລະ ການເງິນ, ຫ້ອງການປະສານງານໂຄງການ. ສະມາຄົມການພັດທະນາສາກົນ (ທະນາຄານໂລກ) ໄດ້ຕົກລົງທີ່ຈະສະໜອງທຶນສໍາລັບໂຄງການ, ຕາມທີ່ໄດ້ກໍານົດ ແລະ ອ້າງອີງໄວ້ໃນຂໍ້ຕົກລົງ.

2. ຜູ້ຮັບທຶນ ຈະຕ້ອງຮັບປະກັນວ່າໂຄງການດັ່ງກ່າວຖືກຈັດຕັ້ງປະຕິບັດຕາມມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ, ໃນລັກສະນະທີ່ທະນາຄານໂລກຍອມຮັບ. ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ແມ່ນສ່ວນໜຶ່ງຂອງສັນຍາເງິນກູ້ ແລະ ສັນຍາໂຄງການ. ເວັ້ນເສຍແຕ່ໄດ້ກໍານົດໄວ້ເປັນຢ່າງອື່ນໃນແຜນພັນທະ ດ້ານສິ່ງແວດລ້ອມ ແລະ ສັງຄົມນີ້, ຄໍາທີ່ໃຊ້ເປັນຕົວພິມໃຫຍ່ ສໍາລັບພາສາອັງກິດແມ່ນ "ESCP" ນີ້ມີຄວາມໝາຍອ້າງອີງ ທີ່ລະບຸໄວ້ໃນຂໍ້ຕົກລົງ.

3. ໂດຍບໍ່ຈໍາກັດຕໍ່ສິ່ງທີ່ໄດ້ກ່າວມາກ່ອນໜ້ານີ້, ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ ໄດ້ກໍານົດມາດຕະການດ້ານເອກະສານ ແລະ ການປະຕິບັດງານທີ່ຜູ້ຮັບທຶນ ຈະຕ້ອງປະຕິບັດ ຫຼື ເຮັດໃຫ້ເກີດການດໍາເນີນການຕາມຄວາມເໝາະສົມ, ໄລຍະເວລາຂອງການປະຕິບັດ ແລະ ມາດຕະການ, ສະຖາບັນ, ພະນັກງານ, ການຝຶກອົບຮົມ, ການຕິດຕາມ, ການກະກຽມການລາຍງານ ແລະ ການຄຸ້ມຄອງຂໍ້ຂ້ອງໃຈ. ແຜນພັນທະດ້ານສັງຄົມ ແລະ ສິ່ງແວດລ້ອມຍັງໄດ້ກໍານົດເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຈະໄດ້ຮັບການຮັບຮອງ ແລະ ປະຕິບັດພາຍໃຕ້ໂຄງການ, ເຊິ່ງທັງໝົດນີ້ຈະຕ້ອງມີການປຶກສາຫາລື ແລະ ເປີດເຜີຍກ່ອນການເລີ່ມຕົ້ນໂຄງການ ເພື່ອໃຫ້ສອດຄ່ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ ໃນຮູບແບບ ແລະ ເນື້ອໃນ ທີ່ເປັນທີ່ຍອມຮັບເມື່ອໄດ້ຮັບການຮັບຮອງແລ້ວ, ເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມ ອາດຈະໄດ້ຮັບການປັບປຸງເປັນແຕ່ລະໄລຍະ ໂດຍມີການຕົກລົງເຫັນດີເປັນລາຍລັກອັກສອນຈາກທະນາຄານໂລກເສຍກ່ອນ.

4. ຕາມການຕົກລົງຂອງທະນາຄານໂລກ ແລະ ຜູ້ຮັບທຶນ, ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ ຈະໄດ້ຮັບການປັບປຸງເປັນແຕ່ລະໄລ່ຍະ ຖ້າຈໍາເປັນ, ໃນລະຫວ່າງການປະຕິບັດໂຄງການ, ເພື່ອສະທ້ອນເຖິງການຄຸ້ມຄອງການປ່ຽນແປງຂອງໂຄງການ ແລະ ສະຖານະການທີ່ບໍ່ໄດ້ຄາດໄວ້ ຫຼື ເພື່ອຕອບສະໜອງການປະຕິບັດໂຄງການ. ໃນສະພາບການດັ່ງກ່າວ, ຜູ້ຮັບທຶນ ໂດຍຜ່ານກົມແຜນການ ແລະ ການເງິນ, ໜ່ວຍງານປະສານງານໂຄງການ, ກະຊວງສາທາລະນະສຸກ ແລະ ທະນາຄານໂລກໄດ້ຕົກລົງທີ່ຈະປັບປຸງ ແຜນພັນທະສິ່ງແວດລ້ອມ ແລະ ສັງຄົມ ເພື່ອສະທ້ອນເຖິງການປ່ຽນແປງເຫຼົ່ານີ້ ໂດຍຜ່ານການແລກປ່ຽນເອກະສານທີ່ໄດ້ລົງນາມ ລະຫວ່າງທະນາຄານໂລກ ແລະ ກະຊວງສາທາລະນະສຸກ ເຊິ່ງທາງຜູ້ຮັບທຶນ ຈະຕ້ອງໄດ້ມີການເຜີຍແຜ່ ESCP ທີ່ໄດ້ຮັບການປັບປຸງດັ່ງກ່າວໂດຍທັນທີ.

| ມາດຕະການ ແລະ ການປະຕິບັດ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| **ການຕິດຕາມ ແລະ ການລາຍງານ** | | | |
| ກ | **ການລາຍງານປົກກະຕິ**<br>ກະກຽມບົດລາຍງານການຕິດຕາມດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພຂອງໂຄງການ ຍື່ນສະເໜີຕໍ່ທະນາຄານໂລກ, ລວມທັງ ແຕ່ຈຳກັດການຈັດຕັ້ງປະຕິບັດແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຈຳເປັນ, ສະພາບການກະກຽມ ແລະ ການປະຕິບັດເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຈຳເປັນ ພາຍໃຕ້ການຈັດຕັ້ງປະຕິບັດແຜນພັນທະທາງສິ່ງແວດລ້ອມ ແລະ ສັງຄົມ, ສະຖານະພາບສຸຂະອະນາໄມດ້ານສິ່ງແວດລ້ອມໃນສະຖານທີ່ສາທາລະນະສຸກຂັ້ນຕົ້ນ ທີ່ວັດແທກດ້ວຍຄະແນນການປະຕິບັດດ້ານຄຸນນະພາບ, ກິດຈະກຳການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການການປະຕິບັດກົນໄກການແກ້ໄຂຂໍ້ຂ້ອງໃຈ (GRM) | ທຸກໆ 6 ເດືອນ ເລີ່ມຈາກວັນທີ່ມີຜົນບັງຄັບໃຊ້ ແລະ ປະຈຳປີຕະຫຼອດການຈັດຕັ້ງປະຕິບັດໂຄງການ | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |
| ຂ | **ເຫດການ ແລະ ອຸປະຕິເຫດ**<br>ແຈ້ງໃຫ້ທະນາຄານໂລກຮັບຮູ້ໂດຍທັນທີ ກ່ຽວກັບເຫດການ ຫຼື ອຸປະຕິເຫດທີ່ກ່ຽວຂ້ອງກັບໂຄງການຖ້າມີ ຫຼື ອາດຈະມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຊຸມຊົນ, ປະຊາຊົນ ຫຼື ຜູ້ອອກແຮງງານ ທີ່ໄດ້ຮັບກະທົບທີ່ຫຼວງຫຼາຍ, ລວມທັງທີ່ກ່ຽວຂ້ອງກັບ ກໍລະນີການເອົາປຽບທາງເພດ ແລະ ການລ່ວງລະເມີດທາງເພດ ແລະ ອຸປະຕິເຫດທີ່ເຮັດໃຫ້ເກີດການເສຍຊີວິດ, ການບາດເຈັບສາຫັດ ຕ້ອງໃຫ້ລາຍລະອຽດພຽງພໍກ່ຽວກັບຂອບເຂດ, ສາເຫດທີ່ເກີດຂຶ້ນ, ຄວາມຮຸນແຮງ ແລະ ສາຍເຫດທີ່ເປັນໄປໄດ້ຂອງເຫດການ ຫຼື ອຸປະຕິເຫດ, ແຈ້ງໃຫ້ຮູ້ ກ່ຽວກັບມາດຕະການຮີບດ່ວນ ຫຼື ການວາງແຜນທີ່ຈະດຳເນີນການແກ້ໄຂ ແລະ ຂໍ້ມູນຕ່າງໆທີ່ຜູ້ຮັບເໝົາ ຫຼື ບໍລິສັດຄວບຄຸມງານ ສະໜອງໃຫ້ຕາມຄວາມເໝາະສົມ.<br><br>ຕໍ່ຈາກນັ້ນ, ຕາມການຮຽກຮ້ອງຂອງທະນາຄານໂລກ, ໃຫ້ກະກຽມບົດລາຍງານກ່ຽວກັບເຫດການ ຫຼື ອຸປະຕິເຫດ ແລະ ໃຫ້ສະເໜີບັນດາມາດຕະການແກ້ໄຂ ແລະ ສະກັດກັ້ນບໍ່ໃຫ້ເກີດຂຶ້ນອີກ. | ແຈ້ງທະນາຄານໂລກໃຫ້ຮັບຮູ້ບໍ່ເກີນ 48 ຊົ່ວໂມງຫຼັງຈາກຮູ້ເຫດການ ຫຼື ອຸບັດຕິເຫດ.<br><br>ສະໜອງບົດລາຍງານໃຫ້ທະນາຄານໂລກພາຍໃນໄລຍະເວລາທີ່ໄດ້ຕົກລົງກັນ | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |

| | | | |
|---|---|---|---|
| ຄ | **ບົດລາຍງານປະຈຳເດືອນຂອງຜູ້ຮັບເໝົາ**<br>ຖ້າມີການຈ້າງຜູ້ຮັບເໝົາ, ຄວນສົ່ງບົດລາຍງານການຕິດຕາມກວດກາປະຈຳເດືອນ ໂດຍສັງລວມການຈັດຕັ້ງປະຕິບັດມາດຕະການແກ້ໄຂດ້ານສິ່ງແວດລ້ອມ ແລະ ສັງຄົມໃຫ້ຫ້ອງການປະສານງານໂຄງການ ເຊິ່ງສາມາດຍື່ນສະເໜີຕໍ່ທະນາຄານໂລກ 2 ຄັ້ງຕໍ່ປີ | ລາຍງານປະຈຳເດືອນໃຫ້ NPCO ຕະຫຼອດໄລຍະການກໍ່ສ້າງ | ຜູ້ຮັບເໝົາ, ຫ້ອງການປະສານງານໂຄງການ (NPCO) |
| **ມາດຕະຖານດ້ານ ສິ່ງແວດລ້ອມ ແລະ ສັງຄົມ 1 (ມສສ 1): ວຽກງານການຄຸ້ມຄອງດ້ານ ສິ່ງແວດລ້ອມ ແລະ ສັງຄົມ: ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ, ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ** | | | |
| 1.1 | **ໂຄງສ້າງດ້ານອົງການຈັດຕັ້ງ**<br>ກ. ສ້າງຕັ້ງ ແລະ ນຳໃຊ້ຫ້ອງການປະສານງານໂຄງການ ຢູ່ກະຊວງສາທາລະນະສຸກ ໂດຍມີພະນັກງານ ແລະ ຊັບພະຍາກອນທີ່ມີຄຸນວຸດທິ ເພື່ອສະໜັບສະໜູນການຄຸ້ມຄອງຄວາມສ່ຽງດ້ານສັງຄົມ, ສຸຂະພາບ, ຄວາມປອດໄພ ແລະ ຜົນກະທົບຂອງໂຄງການ, ລວມທັງພະນັກງານດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງໜ້ອຍໜຶ່ງຄົນ ແລະ ທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມພາຍໃນ ປະຈຳຢູ່ທີ່ຫ້ອງການປະສານງານໂຄງການ ເພື່ອສະໜັບສະໜູນການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ຄວາມປອດໄພ ແລະ ຜົນກະທົບຂອງໂຄງການ.<br>ຂ. ພະນັກງານສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຮັບການສະໜັບສະໜູນຈາກທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຮັບຜິດຊອບໃນການວາງແຜນ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດເຄື່ອງມື ແລະ ກິດຈະກຳຂອງໂຄງການ ຂອງກອບດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງໃຫ້ການຝຶກອົບຮົມແກ່ພະນັກງານໂຄງການ ແລະ ໜ່ວຍງານທີ່ປະຕິບັດຫຼັກ ກ່ຽວກັບການຄຸ້ມຄອງ ແລະ ການລາຍງານດ້ານສິ່ງແວດລ້ອມ, ຄວາມສ່ຽງທາງດ້ານສັງຄົມ, ສຸຂະພາບ, ຄວາມປອດໄພ ແລະ ຜົນກະທົບຂອງໂຄງການ.<br>ຄ. ຫ້ອງການສາທາລະນະສຸກຢູ່ຂັ້ນແຂວງ ແລະ ເມືອງ (PHO/DHO), ຕ້ອງມີຜູ້ປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ຮັບຜິດຊອບໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຈຸດສຸມ | ບັນຈຸ ພະນັກງານສິ່ງແວດລ້ອມ ແລະ ສັງຄົມ (1) ພາຍໃນ 60 ວັນນັບຈາກມື້ທີ່ໂຄງການມີຜົນສັກສິດ. ພະນັງານ E&S ຈະຖືກຮັກສາໄວ້ສຳລັບການຈັດຕັ້ງປະຕິບັດເຄື່ອງມື ESF ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການ.<br><br>ການຮັບສະໝັກທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESC) ໃຫ້ສຳເລັດພາຍໃນ 90 ວັນຫຼັງຈາກວັນທີມີຜົນສັກສິດ.<br><br>ຜູ້ປະສານງານຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຕ້ອງໄດ້ຮັບການແຕ່ງຕັ້ງພາຍໃນ 90 ວັນ ພາຍຫຼັງໂຄງການມີຜົນສັກສິດ<br><br>ເມື່ອມີຄວາມຈຳເປັນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ | ຫ້ອງການປະສານງານໂຄງການ (NPCO)<br><br>PHO ແລະ DHO<br><br>ຫ້ອງການສາທາລະນະສຸກແຂວງ ແລະ ເມືອງ |

| | | | |
|---|---|---|---|
| | ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງການຮັບປະກັນວ່າຂະບວນການ GRM ທັງໝົດ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.<br>ງ. ຮັບສະໝັກທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມຂອງແຂວງ ເພື່ອສະໜັບສະໜູນຜູ້ປະສານງານດ້ານສິ່ງແວດລ້ອມ-ສັງຄົມ ຕາມຄວາມຮຽກຮ້ອງຕ້ອງການ ເພື່ອປະຕິບັດໜ້າທີ່ຂອງແຕ່ລະໜ້າວຽກໃຫ້ສຳເລັດ. | | |
| 1.2 | **ເຄື່ອງມືໃນການຄຸ້ມຄອງ ດ້ານສິ່ງແວດລ້ອມ ແລະ ສັງຄົມ**<br>ກ. ກະກຽມ, ເຜີຍແຜ່, ປຶກສາຫາລື, ນຳໃຊ້ ແລະ ຈັດຕັ້ງປະຕິບັດກອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMF) ຂອງໂຄງການ, ສອດຄ່ອງກັບມາດຕະຖານສິ່ງແວດລ້ອມ - ສັງຄົມທີ່ກ່ຽວຂ້ອງ.<br>ຂ. ປະເມີນຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຜົນກະທົບຂອງກິດຈະກຳໂຄງການ, ໂດຍສອດຄ່ອງກັບກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ.<br>ຄ. ກະກຽມ, ເຜີຍແຜ່, ນຳໃຊ້ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຫຼື ເຄື່ອງມືອື່ນໆທີ່ຕ້ອງການສຳລັບກິດຈະກຳຂອງໂຄງການຕາມຂັ້ນຕອນການປະເມີນ ອີງຕາມມາດຕະຖານ ສິ່ງແວດລ້ອມ ແລະ ສັງຄົມ ທີ່ລະບຸໄວ້ໃນ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ບົດແນະນຳກ່ຽວກັບຄວາມ ປອດໄພທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (EHSG) ແລະ ແນວທາງການປະຕິບັດໃນດ້ານອຸສາຫະກຳແບບສາກົນທີ່ດີ (GIIP) ລວມທັງບົດແນະນຳທີ່ກ່ຽວຂ້ອງຂອງ ອົງການອະນາໄມໂລກ ກ່ຽວກັບການປ້ອງກັນ COVID-19 ໃນລັກສະນະທີ່ຍອມຮັບໄດ້ໂດຍທະນາຄານໂລກ. | ກ. ຮັບຮອງເອົາ ESMF ທັນທີທີ່ໂຄງການມີຜົນບັງຄັບໃຊ້ ແລະ ຫຼັງຈາກນັ້ນປະຕິບັດ ESMF ຕະຫຼອດການຈັດຕັ້ງປະຕິບັດໂຄງການ.<br>ຂ. ແຜນການ/ເຄື່ອງມືຕ່າງໆ ຈະຖືກກະກຽມ, ເຜີຍແຜ່, ປຶກສາຫາລື ແລະ ນຳໃຊ້ກ່ອນການດຳເນີນກິດຈະກຳຂອງໂຄງການທີ່ກ່ຽວຂ້ອງ ແລະ ຫຼັງຈາກນັ້ນຈັດຕັ້ງປະຕິບັດຕະຫຼອດການດຳເນີນກິດຈະກຳດັ່ງກ່າວ.<br>ຄ. ກ່ອນທີ່ຈະເລີ່ມຂະບວນການຈັດຊື້-ຈັດຈ້າງ ສຳລັບກິດຈະກຳຂອງໂຄງການທີ່ກ່ຽວຂ້ອງ ແລະ ຫຼັງຈາກນັ້ນ ຕະຫຼອດການປະຕິບັດກິດຈະກຳດັ່ງກ່າວ. | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |
| 1.3 | **ການຄຸ້ມຄອງຜູ້ຮັບເໝົາ**<br>ລວມເອົາລັກສະນະທີ່ກ່ຽວຂ້ອງຂອງ ESCP ລວມທັງເຄື່ອງມື E&S ທີ່ກ່ຽວຂ້ອງຕ່າງໆ, ຂັ້ນຕອນການຄຸ້ມຄອງແຮງງານ ແລະ ກົດລະບຽບການປະພຶດ ເຂົ້າໄປໃນຂໍ້ກຳຫນົດກ່ຽວກັບ ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງເອກະສານການຈັດຊື້ ແລະ ສັນຍາກັບຜູ້ຮັບເຫມົາ ແລະ ບໍລິສັດຄວບຄຸມງານ. ຫຼັງຈາກນັ້ນ, ໃຫ້ແນ່ໃຈວ່າຜູ້ຮັບເຫມົາ ແລະ ບໍລິສັດຄວບຄຸມງານ ປະຕິບັດຕາມ ແລະ ເຮັດໃຫ້ຜູ້ຮັບເຫມົາຍ່ອຍປະຕິບັດຕາມຂໍ້ກຳນົດ ESHS ຂອງສັນຍາຂອງພວກເຂົາ. | ເປັນສ່ວນຫນຶ່ງຂອງການກະກຽມເອກະສານການຈັດຊື້-ຈັດຈ້າງ ແລະ ສັນຍາທີ່ກ່ຽວຂ້ອງ. ຄຸ້ມຄອງຜູ້ຮັບເໝົາຕະຫຼອດການຈັດຕັ້ງປະຕິບັດໂຄງການ | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |

| | | | |
|---|---|---|---|
| 1.4 | **ການຊ່ວຍເຫຼືອດ້ານວິຊາການ**<br>ຮັບປະກັນວ່າການໃຫ້ຄຳປຶກສາ, ການສຶກສາ, ການສ້າງຄວາມອາດສາມາດ, ການຝຶກອົບຮົມ ແລະ ກິດຈະກຳການຊ່ວຍເຫຼືອດ້ານວິຊາການອື່ນໆພາຍໃຕ້ໂຄງການ ແມ່ນດຳເນີນໄປຕາມເງື່ອນໄຂໜ້າວຽກທີ່ຍອມຮັບຂອງທະນາຄານໂລກ ແລະ ສອດຄ່ອງກັບ ມສສ ທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ, ຮັບປະກັນວ່າຜົນໄດ້ຮັບຂອງກິດຈະກຳດັ່ງກ່າວປະຕິບັດຕາມເງື່ອນໄຂໜ້າວຽກດັ່ງກ່າວ. | ຕະຫຼອດການຈັດຕັ້ງປະຕິບັດໂຄງການ. | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |
| 1.5 | **ສະໜອງເງິນເພື່ອຕອບສະໜອງເຫດສຸກເສີນທີ່ອາດເກີດຂຶ້ນ (CERC)**<br><br>ກ) ຮັບປະກັນວ່າຄູ່ມື CERC ຕາມທີ່ລະບຸໄວ້ໃນຂໍ້ຕົກລົງທາງດ້ານກົດໝາຍປະກອບມີຄຳອະທິບາຍກ່ຽວກັບການປະເມີນ ແລະ ການຄຸ້ມຄອງກ່ຽວກັບ ESHS ສາມາດນຳໃຊ້ໄດ້ ສຳລັບການປະຕິບັດອົງປະກອບ CERC ອີງຕາມ ມສສ.<br>ຂ) ກະກຽມ, ເຜີຍແຜ່, ປຶກສາຫາລື ແລະ ນຳໃຊ້ເຄື່ອງມືສິ່ງແວດລ້ອມ ແລະ ສັງຄົມ (E&S) ທີ່ອາດຈະຕ້ອງການສຳລັບກິດຈະກຳພາຍໃຕ້ອົງປະກອບຂອງ CERC ຂອງໂຄງການ, ອີງຕາມຄູ່ມື CERC ຫຼື ເອກະສານຊ້ອນທ້າຍ CERC-ESMF ແລະ ສາມາດນຳໃຊ້ໄດ້ ແລະ ກ່ຽວກັບ ມສສ ແລະ ຫຼັງຈາກນັ້ນປະຕິບັດມາດຕະການ ແລະ ການປະຕິບັດທີ່ຈຳເປັນພາຍໃຕ້ເຄື່ອງມື E&S, ພາຍໃນໄລຍະເວລາທີ່ກຳນົດໄວ້ໃນເຄື່ອງມື E&S ດັ່ງກ່າວ. | ກ) ການຮັບຮອງເອົາຄູ່ມື CERC ແລະ ເຄື່ອງມືທີ່ກ່ຽວຂ້ອງອື່ນໆ, ຖ້າມີ, ໃນຮູບແບບ ແລະ ເນື້ອໃນທີ່ຍອມຮັບໂດຍທະນາຄານໂລກ ຊຶ່ງເປັນເງື່ອນໄຂຂອງການຖອນຄືນພາຍໃຕ້ພາກທີ 2 ຂອງສັນຍາທາງດ້ານກົດໝາຍສຳລັບໂຄງການ;<br>ຂ) ແຜນການຄຸ້ມຄອງ E&S ຫຼື ເຄື່ອງມືຕ່າງໆ ຈະຖືກກະກຽມ, ເຜີຍແຜ່, ປຶກສາຫາລື ແລະ ຫຼັງຈາກນັ້ນຈະຖືກນຳມາໃຊ້ກ່ອນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການທີ່ກ່ຽວຂ້ອງພາຍໃຕ້ອົງປະກອບຂອງ CERC, ແຜນການຄຸ້ມຄອງ E&S ຕ້ອງໄດ້ຮັບການປະຕິບັດຕາມເງື່ອນໄຂຕະຫຼອດການຈັດຕັ້ງປະຕິບັດໂຄງການ. | ໜ່ວຍງານທີ່ຮັບຜິດຊອບທີ່ໄດ້ຮັບການແຕ່ງຕັ້ງໂດຍລັດຖະບານ ເພື່ອຮັບຜິດຊອບກ່ຽວກັບ CERC |

| | | | |
|---|---|---|---|
| **ມສສ 2: ເງື່ອນໄຂດ້ານແຮງງານ ແລະ ການເຮັດວຽກ** | | | |
| 2.1 | **ຂັ້ນຕອນການຄຸ້ມຄອງດ້ານແຮງງານ**<br>ນໍາໃຊ້ ແລະ ຈັດຕັ້ງປະຕິບັດຂັ້ນຕອນການຄຸ້ມຄອງແຮງງານ (LMP) ສໍາລັບໂຄງການ, ລວມທັງ ຂໍ້ກໍານົດກ່ຽວກັບເງື່ອນໄຂການເຮັດວຽກ, ການຄຸ້ມຄອງຄວາມສໍາພັນຂອງພະນັກງານ, ສຸຂະພາບ ແລະ ຄວາມປອດໄພ (ລວມທັງອຸປະກອນປ້ອງກັນສ່ວນບຸກຄົນ, ແລະ ການກຽມພ້ອມ ແລະ ຕອບໂຕ້ສຸກເສີນ), ກົດລະບຽບການປະພຶດ (ລວມທັງທີ່ກ່ຽວຂ້ອງກັບ SEA ແລະ SH), ການບັງຄັບໃຊ້ແຮງງານ, ແຮງງານເດັກ, ການຄຸ້ມຄອງການແກ້ໄຂຂໍ້ຂ້ອງໃຈ ສໍາລັບພະນັກງານໂຄງການ ແລະ ຂໍ້ກໍານົດທີ່ກ່ຽວຂ້ອງສໍາລັບຜູ້ຮັບເໝົາ, ຜູ້ຮັບເໝົາຍ່ອຍ ແລະ ບໍລິສັດທີ່ຄວບຄຸມງານ. | ກ່ອນມີການບັນຈຸພະນັກງານໂຄງການໃນການຈັດຕັ້ງປະຕິບັດກິດຈະກໍາຕ່າງໆໃນພື້ນທີ່.<br><br>ທຸກໆມາດຕະການທີ່ລະບຸໄວ້ຂໍ້ 2.1 ນີ້ ຈະຖືກຈັດຕັ້ງປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ | ຫ້ອງການປະສານງານໂຄງການ (NPCO), ກະຊວງສາທາລະນະສຸກ |
| 2.2 | **ກົນໄກການສະເໜີຂໍ້ຂ້ອງໃຈ ສໍາລັບແຮງງານໃນໂຄງການ**<br>ສ້າງຕັ້ງ ແລະ ດໍາເນີນກົນໄກການສະເໜີຂໍ້ຂ້ອງໃຈ ສໍາລັບພະນັກງານໂຄງການ, ດັ່ງທີ່ໄດ້ອະທິບາຍໄວ້ໃນ LMP ແລະ ສອດຄ່ອງກັບ ມສສ 2. | ສ້າງຕັ້ງກົນໄກການສະເໜີຂໍ້ຂ້ອງໃຈກ່ອນ ແລະ ຫຼັງຂອງການດໍາເນີງານຂອງໂຄງການ ຈາກນັ້ນຈັດຕັ້ງປະຕິບັດ ຕະຫຼອດການດໍາເນີນງານໂຄງການ. | NPCO<br>PHO ແລະ<br>ຜູ້ຮັບເໝົາ |
| **ມສສ 3: ປະສິດທິພາບດ້ານຊັບພະຍາກອນ ແລະ ການປ້ອງກັນມົນລະພິດ ແລະ ການຄຸ້ມຄອງ** | | | |
| 3.1 | **ແຜນການຄຸ້ມຄອງສິ່ງເສດເຫຼືອ ຈາກການດູແລດ້ານສຸຂະພາບ**<br>ນໍາໃຊ້ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງເສດເຫຼືອດ້ານສຸຂະພາບ (HCWMP), ໂດຍອີງໃສ່ປຶດແນະນໍາກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອແຫຼມຄົມ ແລະ ກົດລະບຽບຂອງ MOH, ເພື່ອຄຸ້ມຄອງສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ ເຊິ່ງສອດຄ່ອງກັບ ມສສ 3. | ນໍາໃຊ້ HCWMP ກ່ອນທີ່ຈະເລີ່ມຕົ້ນການການມອບເງິນໃຫ້ໂຮງໝໍນ້ອຍຕາມຜົນໄດ້ຮັບໃນການປະເມີນໂຮງໝໍນ້ອຍ ແລະ ຫຼັງຈາກນັ້ນປະຕິບັດ HCWMP ຕະຫຼອດການດໍາເນີນຂອງໂຄງການ. | NPCO |
| 3.2 | **ການປັບປຸງຢ່າງຕໍ່ເນື່ອງດ້ານສຸຂະອະນາໄມສິ່ງແວດລ້ອມຢູ່ສະຖານທີ່ດູແລສຸຂະພາບຂັ້ນຕົ້ນ**<br>ລວມເອົາມາດຖານດ້ານສຸຂະອະນາໄມສິ່ງແວດລ້ອມໃສ່ໃນຕາຕະລາງໃຫ້ຄະແນນການປະຕິບັດງານທີ່ມີຄຸນນະພາບ (QPS) ຊຶ່ງເປັນສ່ວນໜຶ່ງຂອງຄູ່ມືການດໍາເນີນງານຂອງໂຄງການ, ປະເມີນ ແລະ ປັບປຸງສະພາບສຸຂະອະນາໄມສິ່ງແວດລ້ອມຢູ່ສະຖານທີ່ຮັກສາສຸຂະພາບຂັ້ນຕົ້ນຢ່າງຕໍ່ເນື່ອງຕະຫຼອດໄລຍະເວລາຂອງໂຄງການ. | ນໍາໃຊ້ມາດຖານດ້ານສຸຂະອະນາໄມສິ່ງແວດລ້ອມໃນປຶດບັນທຶກການປະຕິບັດງານທີ່ມີຄຸນນະພາບ ເປັນສ່ວນໜຶ່ງຂອງຄູ່ມືການດໍາເນີນງານຂອງໂຄງການທັນທີທີ່ ໂຄງການມີຜົນສັກສິດ, ຫຼັງຈາກນັ້ນໃຫ້ປະຕິບັດມາດຖານການອະນາໄມສິ່ງແວດລ້ອມຕະຫຼອດໄລຍະເວລາຂອງໂຄງການ. | NPCO<br>PHO, DHO ແລະ<br>ສະຖານທີ່ດູແລສຸຂະພາບ |

| | | | |
|---|---|---|---|
| **ມສສ 4: ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ** | | | |
| 4.1 | **ການສັນຈອນ ແລະ ຄວາມປອດໄພທາງຖະໜົນ**<br>ລວມເອົາມາດຕະການໃນການຄຸ້ມຄອງຄວາມສ່ຽງດ້ານການຈະລາຈອນ ແລະ ຄວາມປອດໄພທາງຖະໜົນຕາມເງື່ອນໄຂໃນ LMP ທີ່ໄດ້ກະກຽມພາຍໃຕ້ຂໍ້ [2.1] ຂ້າງເທິງ ແລະ ຕາມທີ່ໄດ້ລະບຸໄວ້ໃນ ESMF.<br>ມາດຕະການຄວາມປອດໄພດ້ານຈະລາຈອນ ແລະ ຖະໜົນຫົນທາງແມ່ນໄດ້ນຳໃຊ້ກັບພະນັກງານໂຄງການທັງໝົດ ລວມທັງພະນັກງານຊຸມຊົນ (ໃນໜ້າທີ່ຂອງຜູ້ອຳນວຍຄວາມສະດວກຂັ້ນບ້ານ ທີ່ຈະມີສ່ວນຮ່ວມ ສຳລັບທຸກບ້ານຂອງໂຄງການ). | ນຳໃຊ້ມາດຕະການທີ່ກ່ຽວຂ້ອງໃນ ESMF ທັນທີທີ່ໂຄງການມີຜົນບັງຄັບໃຊ້ ແລະ ຫຼັງຈາກນັ້ນປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ, ລວມທັງກ່ອນທີ່ພະນັກງານໂຄງການຈະເລີ່ມເຮັດວຽກ / ສັນຍາ ໃນກິດຈະກຳຂອງໂຄງການ. | NPCO<br>PHO, DHO ແລະ ຜູ້ຮັບເໝົາ |
| 4.2 | **ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ**<br>ປະເມີນ ແລະ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບສະເພາະຕໍ່ກັບຊຸມຊົນທີ່ເກີດຂຶ້ນຈາກກິດຈະກຳຂອງໂຄງການ ລວມທັງ ຄວາມສ່ຽງທີ່ກ່ຽວຂ້ອງກັບຄວາມປອດໄພຂອງການຈະລາຈອນ, ຄວາມສ່ຽງທີ່ກ່ຽວຂ້ອງກັບການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ, ຄວາມຮຸນແຮງຕໍ່ເດັກນ້ອຍ, ຄວາມຮຸນແຮງໃນຄອບຄົວ ແລະ ລວມເອົາມາດຕະການຫຼຸດຜ່ອນໃນໂຄງການ. ຄູ່ມືການດຳເນີນງານຂອງໂຄງການທີ່ຈະຖືກກະກຽມໃຫ້ສອດຄ່ອງກັບ ESMF. | ນຳໃຊ້ມາດຕະການທີ່ກ່ຽວຂ້ອງ ESMF ທັນທີທີ່ໂຄງການມີຜົນບັງຄັບໃຊ້ ແລະ ຫຼັງຈາກນັ້ນປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ. | NPCO<br>PHO, DHO ແລະ ໂຮງໝໍນ້ອຍ |
| 4.3 | **ຄວາມສ່ຽງກ່ຽວກັບ SEA/SH/VAC**<br>ປັບປຸງ, ນຳໃຊ້ ແລະ ປະຕິບັດມາດຕະການລວມທັງກົດລະບຽບການປະພຶດ (CoC) ເພື່ອຫຼີກເວັ້ນ / ຫຼຸດຜ່ອນ ຄວາມສ່ຽງທີ່ກ່ຽວຂ້ອງກັບ SEA / SH / VAC ເປັນສ່ວນໜຶ່ງຂອງ SS-ESMPs ໂດຍອີງໃສ່ການປະເມີນ ES ແລະ ຄຸ້ມຄອງຄວາມສ່ຽງຂອງການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ. ການລ່ວງລະເມີດ (SEA/SH) ແລະ ຄວາມຮຸນແຮງຕໍ່ເດັກນ້ອຍ (VAC).<br><br>ສະໜອງການຝຶກອົບຮົມກ່ຽວກັບຄວາມສ່ຽງ ແລະ ມາດຕະການກ່ຽວກັບ SEA/SH/VAC ລວມທັງ CoC ສຳລັບພະນັກງານໂຄງການ. | ນຳໃຊ້ມາດຕະການທີ່ກ່ຽວຂ້ອງຂອງ ESMF ທັນທີທີ່ໂຄງການມີຜົນບັງຄັບໃຊ້ ແລະ ຫຼັງຈາກນັ້ນປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ. ມາດຕະການຄຸ້ມຄອງຄວາມສ່ຽງກ່ຽວກັບ SEA/SH/VAC ໄດ້ຖືກນຳໃຊ້ ແລະ ຝຶກອົບຮົມໃຫ້ແກ່ ພະນັກງານໂຄງການກ່ອນຈະເລີ່ມເຮັດວຽກ/ສັນຍາ ກ່ຽວກັບກິດຈະກຳຂອງໂຄງການ. | NPCO<br>PHO, DHO ແລະ ຜູ້ຮັບເໝົາ |

| | | | |
|---|---|---|---|
| **ມສສ 5: ການເວນຄືນທີ່ດິນ, ການຈຳກັດການນຳໃຊ້ທີ່ດິນ ແລະ ການຍົກຍ້າຍຈັດສັນໂດຍບໍ່ໄດ້ສະໝັກໃຈ** | | | |
| | ບໍ່ກ່ຽວຂ້ອງ, ເນື່ອງຈາກການປັບປຸງ ຫ້ອງການ/ສະຖານບໍລິການຮັກສາສຸຂະພາບ ທີ່ຈະໄດ້ຮັບທຶນພາຍໃຕ້ໂຄງການ ຈະຖືກດຳເນີນການຢູ່ໃນສະຖານທີ່ ທີ່ມີຢູ່ແລ້ວຂອງໂຮງໝໍນ້ອຍ | | |
| **ມສສ 6: ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ** | | | |
| | ບໍ່ກ່ຽວຂ້ອງ, ໂຄງການບໍ່ມີກິດຈະກຳໃດໆ ທີ່ສົ່ງຜົນກະທົບຕໍ່ຊີວະນາໆພັນໃນພື້ນທີ່ໂຄງການ. | | |
| **ມສສ 7: ຊົນເຜົ່າພື້ນເມືອງ** | | | |
| 7.1 | **ກອບການພັດທະນາກຸ່ມຊົນເຜົ່າ ແມ່ນໄດ້ລວມເຂົ້າໃນ ແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນທີ່ກ່ຽວຂ້ອງ**<br>ໂຄງການຈະດຳເນີນໄປຕາມຂໍ້ກຳນົດຂອງ ມສສ 7 ລວມມີ: (i) ຮັບປະກັນວ່າແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ (SEP) ປະກອບມີການປຶກສາຫາລືທີ່ມີຄວາມໝາຍກັບປະຊາຊົນບັນດາເຜົ່າຕະຫຼອດການຈັດຕັ້ງປະຕິບັດໂຄງການ; (ii) ຂັ້ນຕອນການຈັດຕັ້ງປະຕິບັດ, ຮູບແບບການດຳເນີນງານ ແລະ/ຫຼື ມາດຕະການອື່ນໆ ເພື່ອຮັບປະກັນໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງຜົນປະໂຫຍດຂອງໂຄງການຢ່າງຍຸດຕິທຳ, ສະເໝີພາບ, ທົ່ວເຖິງ ແລະ ເໝາະສົມທາງດ້ານວັດທະນະທຳ, ລວມທັງມີຄວາມກ່ຽວຂ້ອງກັບຜົນປະໂຫຍດຂອງໂຄງການ, ຕາມທີ່ໄດ້ກຳນົດໄວ້ໃນເອກະສານ ESMF ແລະ SEP; ແລະ (iii) ການຈັດຕັ້ງປະຕິບັດມາດຕະການເພື່ອຮັບປະກັນວ່າປະຊາຊົນບັນດາເຜົ່າສາມາດເຂົ້າເຖິງກົນໄກການແກ້ໄຂຂໍ້ຂ້ອງໃຈຂອງໂຄງການ (GRM) ໃນລັກສະນະທີ່ເໝາະສົມທາງດ້ານວັດທະນະທຳ. | ນຳໃຊ້ SEP ທັນທີ ພາຍຫຼັງໂຄງການມີຜົນສັກສິດ ແລະ ຫຼັງຈາກນັ້ນປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ. | NPCO |
| **ມສສ 8: ມໍລະດົກທາງວັດທະນະທຳ** | | | |
| 8.1 | **ຂັ້ນຕອນການປະຕິບັດ ໂອກາດພົບເຫັນວັດຖຸທາງວັດທະນາທຳ**<br>ການກຽມ, ນຳໃຊ້ ແລະ ປະຕິບັດຂັ້ນຕອນໂອກາດພົບເຫັນວັດຖຸທາງວັດທະນາທຳໄດ້ປະກອບເປັນສ່ວນໜຶ່ງຂອງ ESMF. | ຕະຫຼອດການຈັດຕັ້ງປະຕິບັດໂຄງການສຳລັບກິດຈະກຳໃດໆທີ່ຕ້ອງການ ການກໍ່ສ້າງ. | NPCO<br>PHO, DHO ແລະ ໂຮງໝໍນ້ອຍ |

| | | | |
|---|---|---|---|
| **ມສສ 9: ຕົວກາງທາງການເງິນ** | | | |
| ບໍ່ກ່ຽວຂ້ອງ | | | |
| **ມສສ 10: ການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ການເປີດເຜີຍຂໍ້ມູນ** | | | |
| 10.1 | **ການກະກຽມແຜນການ ແລະ ການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ**<br>ນໍາໃຊ້ ແລະ ປະຕິບັດແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ (SEP) ສໍາລັບໂຄງການ, ສອດຄ່ອງກັບ ມສສ 10, ເຊິ່ງຈະຕ້ອງປະກອບມີມາດຕະການເພື່ອສະໜອງຂໍ້ມູນໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງໄດ້ທັນເວລາ, ມີຄວາມກ່ຽວຂ້ອງ, ເຂົ້າໃຈໄດ້ ແລະ ເຂົ້າເຖິງໄດ້ ແລະ ປຶກສາຫາລືກັບເຂົາເຈົ້າໃນລັກສະນະທີ່ເໝາະສົມທາງດ້ານວັດທະນະທໍາ, ເຊິ່ງປາສະຈາກການຫມູນໃຊ້, ການແຊກແຊງ, ການບີບບັງຄັບ, ການຈໍາແນກ ແລະ ການຂົ່ມຂູ່. | ນໍາໃຊ້ SEP ທັນທີທີ່ໂຄງການໄດ້ຮັບຜົນສັກສິດ ແລະ ຫຼັງຈາກນັ້ນໄດ້ປະຕິບັດຕະຫຼອດການປະຕິບັດໂຄງການ. | NPCO |
| 10.2 | **ກົນໄກການສະເໜີຂໍ້ຂ້ອງໃຈພາຍໃນໂຄງການ (GRM)**<br>ສ້າງຕັ້ງ, ໂຄສະນາ, ຮັກສາ, ປະຕິບັດກົນໄກການສະເໜີຂໍ້ຂ້ອງໃຈທີ່ເຂົ້າເຖິງໄດ້, ເພື່ອຮັບ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ກັງວົນ ແລະ ຂໍ້ຂ້ອງໃຈກ່ຽວກັບໂຄງການຢ່າງທັນການ ແລະ ມີປະສິດທິຜົນ, ໂປ່ງໃສ, ເໝາະສົມທາງດ້ານວັດທະນະທໍາ ແລະ ເຂົ້າເຖິງທຸກພາກສ່ວນທີ່ໄດ້ຮັບຜົນກະທົບຈາກໂຄງການ. ໂດຍບໍ່ມີຄ່າໃຊ້ຈ່າຍ ແລະ ບໍ່ມີການລົງໂທດ, ລວມທັງຄວາມກັງວົນ ແລະ ຂໍ້ຂ້ອງໃຈທີ່ຍື່ນໂດຍບໍ່ມີການເປີດເຜີຍຊື່, ໃນລັກສະນະທີ່ສອດຄ່ອງກັບ ມສສ 10.<br><br>ກົນໄກການສະເໜີຂໍ້ຂ້ອງໃຈ ຈະຕ້ອງມີຄວາມພ້ອມໃນການຮັບ, ລົງທະບຽນ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ຂ້ອງໃຈທີ່ກ່ຽວຂ້ອງກັບ SEA/SH, ລວມທັງຜ່ານການສົ່ງຜູ້ລອດຊີວິດໄປຫາຜູ້ໃຫ້ບໍລິການ ການຊ່ວຍເຫຼືອດ້ານຄວາມຮຸນແຮງທາງເພດທີ່ກ່ຽວຂ້ອງ, ທັງຫມົດນີ້ໃນລັກສະນະທີ່ປອດໄພ, ເປັນຄວາມລັບ ແລະ ເອົາຜູ້ລອດຊີວິດເປັນຈຸດໃຈກາງ. | GRM ຂອງໂຄງການຈະມີການດໍາເນີນງານ ແລະ ເຜີຍແຜ່ໃຫ້ຜູ້ມີສ່ວນກ່ຽວຂ້ອງຮັບຮູ້ກ່ອນທີ່ຈະເລີ່ມກິດຈະກໍາຂອງໂຄງການ ແລະ ດໍາເນີນງານຕະຫຼອດການຈັດຕັ້ງປະຕິບັດໂຄງການ. | NPCO<br>PHO, DHO ແລະ ໂຮງໝໍນ້ອຍ |

| ການສະໜັບສະໜູນດ້ານຄວາມອາດສາມາດ | | | |
|---|---|---|---|
| CS1 | NPCO/ກົມແຜນການ ແລະ ການເງິນ ຂອງ MOH, PHO, DHO ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ ຈະໄດ້ຮັບການຝຶກອົບຮົມກ່ຽວກັບເຄື່ອງມື ESF ທີ່ກ່ຽວຂ້ອງຂອງໂຄງການ: ESMF, LMP ແລະ SEP ລວມທັງ CoC ແລະ ຂໍ້ກໍານົດອື່ນໆ ເພື່ອປ້ອງກັນ SEA, GBV ແລະ/ຫຼື VAC, ການນໍາໃຊ້ ESCOP ສໍາລັບວຽກງານກໍ່ສ້າງ ຫຼື ສ້ອມແປງຂະໜາດນ້ອຍ ແລະ ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະໜ່ວຍງານໃນການກະກຽມ ແລະ ປະຕິບັດເຄື່ອງມືເຫຼົ່ານີ້ ທີ່ໄດ້ລະບຸໄວ້ໃນເອກະສານ ESMF.<br><br>NPCO/ກົມແຜນການ ແລະ ການເງິນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ ໃນລະດັບໂຄງການ ຈະໄດ້ຮັບການຝຶກອົບຮົມກ່ຽວກັບການກະກຽມ TOR ແລະ ການຄຸ້ມຄອງສັນຍາເພື່ອຮັບປະກັນວ່າພັນທະຂອງ ມສສ ໂດຍສະເພາະຂໍ້ກໍານົດຂອງ ESCOP, ESHS ແລະ LMP ແມ່ນລວມຢູ່ໃນເອກະສານປະມູນທີ່ກ່ຽວຂ້ອງທັງໝົດ.<br><br>ຜູ້ຮັບເໝົາ/ພະນັກງານໂຄງການ ຈະໄດ້ຮັບການຝຶກອົບຮົມກ່ຽວກັບການກະກຽມ ແລະ ການປະຕິບັດເຄື່ອງມື ESF ທີ່ກ່ຽວຂ້ອງ, ESMP ຂອງຜູ້ຮັບເໝົາ ກວມເອົາ ESHS, ສຸຂະພາບ ແລະ ຄວາມປອດໄພດ້ານອາຊີບ, ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, ແລະ ການກຽມຄວາມພ້ອມ ແລະ ຕອບໂຕ້ສຸກເສີນ ຕໍ່ສະຖານະການສຸກເສີນຕ່າງໆ. | ກ່ອນການປະຕິບັດກິດຈະກໍາຂອງໂຄງການ, ແລະ ຫຼັງຈາກນັ້ນຕະຫຼອດໄລຍະໂຄງການ.<br><br>ການຝຶກອົບຮົມກ່ອນທີ່ຈະດໍາເນີນການປະມູນ.<br><br>ກ່ອນທີ່ຈະເລີ່ມເຮັດວຽກ, ຕະຫຼອດການຈັດຕັ້ງປະຕິບັດໂຄງການ. | NPCO<br>NPCO |